**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

-----------------------------------

ກະຊວງ ກະສິກຳ ແລະ ປ່າໄມ້

ກົມແຜນການ

ໂຄງການ ພັດທະນາໂຄງລ່າງຊົນນະບົດ ພາກເໜືອ

# ບົດລາຍງານຫຍໍ້ ຄວາມຄືບໜ້າມາເຖິງເດືອນພະຈິກ(11)2011

(ໂຄງການ **ພຄຊ ພາກເໜືອ** / ADB GRANT No. 0235-LAO(SF) : **NRI PROJECT**)

ໂຄງການນີ້ ຈະມີການສ້າງຊົນລະປະທານໃໝ່ຂຶ້ນ, ຟື້ນຟູ ແລະ ຍົກລະດັບເສັ້ນທາງຊົນນະບົດຈາກເມືອງ ແລະ ກຸ່ມບ້ານຫາບ້ານ ມີປະມານ 25 ໂຄງການຍ່ອຍ ໂດຍສຸມໃສ່ການຫັນການຜະລິດກະສິກຳເປັນສິນຄ້າ, ນອກນັ້ນມີ ການສ້າງຄວາມອາດສາມາດໃຫ້ແກ່ພະນັກງານດ້ານການ ຈັດຕັ້ງປະຕິບັດ ແລະ ການມີສ່ວນຮ່ວມຂອງຊຸມຊົນ ໂຄງການຍ່ອຍດັ່ງກ່າວໃຫ້ມີປະສິດທິພາບ.[1] ໂຄງການທີ່ສະເໜີນີ້ ຈະຖືກຈັດຕັ້ງປະຕິບັດຢູ່ 4 ແຂວງພາກເໜືອ ລວມມີ ແຂວງບໍ່ແກ້ວ, ຫຼວງນ້ຳທາ, ຜົ້ງສາລີ ແລະ ອຸດົມໄຊ ເຊິ່ງປະກອບມີພົນລະເມືອງທັງໝົດ 763,000 ຄົນ, ໃນນັ້ນມີ 33% ຍັງຖືວ່າທຸກຍາກ. ອັດຕາຄວາມທຸກຍາກຂອງບັນດາເມືອງທີ່ນອນໃນເຂດໂຄງການ ແມ່ນຕ່ຳກວ່າ 25% ໂດຍທີ່ ບັນດາໂຄງການຍ່ອຍດັ່ງກ່າວຈະຈັດຕັ້ງ ປະຕິບັດຢູ່ເຂດທີ່ມີເງື່ອນໄຂໃນການ ປັບປຸງການ ເຂົ້າຫາຕະຫຼາດ ແລະ ການເພີ້ມມູນຄ່າໃຫ້ແກ່ການຜະລິດພາຍໃນ.

## I. ປະຫວັດຄວາມເປັນມາຂອງໂຄງການ

1. ຄວາມທຸກຍາກສ່ວນຫຼາຍແມ່ນນອນຢູ່ໃນເຂດເນີນສູງພາກເໜືອ ໂດຍມີອັດຕາສ່ວນຫຼາຍກວ່າ 40%, ແຕ່ໃນເຂດທີ່ງພຽງກໍ່ຍັງມີຄວາມທຸກຍາກຢູ່ບາງເຂດ ເຊິ່ງສ່ວນຫຼາຍແມ່ນຕິດພັນກັບ ການເຂົ້າເຖິງເສັ້ນທາງ ແລະ ການບໍລິການຕ່າງໆ. ນອກຈາກນັ້ນ, ພື້ນທີ່ເປົ້າໝາຍຂອງໂຄງການແມ່ນເຂດທີ່ຊົນເຜົ່າອາໃສຢູ່ເປັນສ່ວນໃຫຍ່ (52%)ເຊິ່ງເປັນຜູ້ດ້ອຍໂອກາດໃນການມີສ່ວນຮ່ວມເຂົ້າໃນເສດຖະກິດຕະຫຼາດ. ການເຂົ້າຊ່ວຍເຫຼືອ ທີ່ສາມາດ ຊ່ວຍຫັນປ່ຽນທິດທາງລະບົບການຜະລິດ ເພື່ອລຸດຜ່ອນການເອື່ອຍອີງໃສ່ການປູກຝັງແບບໝູນວຽນ ຈະບໍ່ພຽງແຕ່ປະກອບ ສ່ວນໃຫ້ແກ່ການຫຼຸດຜ່ອນຄວາມທຸກຍາກເທົ່ານັ້ນ ແຕ່ຍັງຈະປັນຜົນປະໂຫຍດໃຫ້ແກ່ການແກ້ໄຂບັນຫາການເຊື່ອມໂຊມຂອງສະພາບແວດລ້ອມນຳອີກ. ອັດຕາສະເລ່ຍ ຂອງຄວາມທຸກຍາກໃນແຂວງເປົ້າໝາຍແມ່ນ 33% ແລະ ສ່ວນບັນດາເມືອງທີ່ເຂົ້າຮ່ວມໃນໂຄງການແມ່ນ 25%.

2. ໃນເມື່ອມີສ່ວນເກີນທີ່ເກີດຈາກການຜະລິດແລ້ວ, ການເຂົ້າເຖິງຕະຫຼາດ ແມ່ນຂໍ້ຈຳກັດທີ່ສຳຄັນອີກອັນໜຶ່ງ ໃນການພັດທະນາ. ຂໍ້ຈຳກັດທາງດ້ານເຄືອຂ່າຍຄົມມະນາຄົມຂົນສົ່ງ ເຊັ່ນເສັ້ນທາງເປ່ເພ ແລະ ຄວາມສ່ຽງດ້ານການເຊາະເຈື່ອນຂອງດິນໃນທາງເຂດຄ້ອຍຊັນ ກາຍເປັນຂໍ້ຈຳກັດໃຫ້ແກ່ການເຂົ້າເຖິງຕະຫຼາດ ແລະ ການຜະລິດສິນຄ້າທີ່ເນົ່າເປື່ອຍໄວກໍ່ມີທາງເລືອກຈຳກັດ. ເຄືອຂ່າຍເສັ້ນທາງແມ່ນມີຄວາມຈຳເປັນສຳລັບສ້າງເງື່ອນໄຂ ເພື່ອໃຫ້ຫົວໜ່ວຍ ການຜະລິດທີ່ມີຂະໜາດນ້ອຍ ແລະ ກະແຈກກະຈາຍ ສາມາດເຂົ້າຫາຕະຫຼາດໄດ້ ນອກນັ້ນ ມັນຍັງເປັນການເອື້ອອຳນວຍໃຫ້ແກ່ການລົງທຶນຂອງພາກເອກະ

[1] ADB PPTA No.7362-ສປປລາວ ໄດ້ຮັບການອະນຸມັດໃນການກະກຽມການອອກແບບໂຄງການ ແລະ ການຊ່ວຍເຫຼືອດ້ານວິຊາການ ເພື່ອວາງຄວາມພ້ອມດ້ານການຈັດຕັ້ງປະຕິບັດໂຄງການ.

ຊົນເຂົ້າໃນການປຸງແຕ່ງ ເພື່ອສ້າງມູນຄ່າເພີ່ມ. ໂຄງ ການນີ້ ຈະຊ່ວຍແກ້ໄຂຂໍ້ຈຳກັດພື້ນຖານ 2 ຢ່າງດັ່ງກ່າວ ດ້ວຍການລົງທຶນໃສ່ໂຄງລ່າງພື້ນຖານຊົນນະບົດ ເພື່ອໃຫ້ບັນລຸການຜະລິດກະສິກຳເປັນສິນຄ້າເພີ່ມສູງຂຶ້ນ ດ້ວຍການສ້າງໂອກາດພາຍໃນ ແລະ ບັນດາປະເທດໃກ້ຄຽງ.

3. ຈຸດປະສົງຂອງໂຄງການແມ່ນສອດຄ່ອງກັບການຮ່ວມມື ແລະ ຍຸດທະສາດລະດັບປະເທດ ຂອງທະນາຄານພັດທະນາອາຊີ ກັບ ສປປ ລາວ ທີ່ສຸມໃສ່ໂຄງລ່າງພື້ນຖານຂອງຊົນນະບົດ ເພື່ອເປັນການສົ່ງເສີມການເຕີບໂຕ ທີ່ສຸມໃສ່ຜົນປະໂຫຍດຂອງຜູ້ທຸກຍາກແບບຍືນຍົງ ແລະ ການຮວມຕົວເຂົ້າກັບພາກພື້ນ, ການຫັນການຜະລິດແບບກຸ້ມກິນ ມາເປັນຂະແໜງການທີ່ມີຄວາມຫຼາກຫຼາຍ ດ້ວຍການແກ້ໄຂບັນຫາກີດກັນຕົ້ນຕໍ່ຕໍ່ກັບການຫັນການຜະລິດກະສິກຳເປັນສິນຄ້າ. ການອອກແບບໂຄງການທີ່ສະເໜີນີ້ ແມ່ນອີງໃສ່ບົດຮຽນປະສົບການຂອງການພັດທະນາຊົນນະບົດ ທີ່ທະນາຄານພັດທະນາອາຊີໄດ້ໃຫ້ທຶນໃນໄລຍະຜ່ານມາ ເຊິ່ງລວມມີ ໂຄງການຊົນລະປະທານຂະໜາດນ້ອຍປະຊາ ຊົນຄຸ້ມຄອງ ພາກເໜືອ (NCMI) ທີ່ຫາກໍ່ສິ້ນສຸດລົງຫວ່າງມໍ່ໆມານີ້ ເຊິ່ງເປັນໂຄງທີ່ຈັດຕັ້ງປະຕິບັດໃນເຂດພາກເໜືອ ປະສົບການທີ່ຜ່ານມາ ແລະ ບັນດາຫຼັກການຕ່າງໆ ໄດ້ກາຍເປັນທິດທາງໃຫ້ແກ່ການກະກຽມການອອກແບບ ໂດຍສະເພາະແມ່ນ ກິດຈະກຳທີ່ຈຳເປັນຕ້ອງໄດ້ປະຕິບັດລ່ວງໜ້າ ແລະ ການຄັດເລືອກໂຄງການຍ່ອຍ ທີ່ເໝາະສົມກັບເງື່ອນໄຂຕົວຈິງ.

## II. ຄາດໝາຍຜົນໄດ້ຮັບຂອງໂຄງການ

4. ຜົນຮັບລວມຄື ຊີວິດການເປັນຢູ່ຂອງປະຊາຊົນທີ່ອາໃສຢູ່ເຂດຊົນນະບົດຂອງ 4 ແຂວງພາກເໜືອ ບໍ່ແກ້ວ, ຫຼວງນ້ຳທາ, ຜົ້ງສາລີ ແລະ ອຸດົມໄຊໄດ້ຮັບການປັບປຸງໃຫ້ດີຂຶ້ນ[2]. ຜົນໄດ້ຮັບລວມມີ ສະມັດຕະພາບຜົນຜະລິດກະສິກຳ ແລະ ປະສິດທິພາບທາງດ້ານຕະຫຼາດ ພ້ອມທັງການເຂົ້າເຖິງ ແລະ ການນຳໃຊ້ວັດຖຸອຸປະກອນເຄື່ອງມື,ເຕັກນິກ, ປັດໃຈການຜະລິດ ແລະ ການຕະຫຼາດ ໄດ້ຮັບການປັບປຸງໃຫ້ດີຂຶ້ນ.

## III. ໜ້າວຽກຂອງໂຄງການ

5. ໜ້າວຽກຕົ້ນຕໍ 4 ອົງປະກອບມີ: (i) ໂຄງລ່າງພື້ນຖານຊົນນະບົດ ໄດ້ຮັບການຟື້ນຟູ ແລະ/ຫຼື ກໍ່ສ້າງ ຢ່າງມີປະສິດທິພາບ; (ii) ການມູນຄ່າເພີ່ມການລົງທຶນທີ່ຕິດພັນກັບການຟື້ນຟູໂຄງລ່າງພື້ນຖານ ໄດ້ຮັບການຄຸ້ມຄອງ ເພື່ອສ້າງຄວາມຍືນຍົງໃຫ້ກັບໂຄງການ; (iii) ສ້າງຄວາມອາດສາມາດໃຫ້ການຈັດຕັ້ງຂັ້ນສູນກາງ, ແຂວງ ແລະ ເມືອງ ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາໂຄງການຍ່ອຍ; ແລະ (iv) ການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງໂຄງການ ແລະ ໂຄງການຍ່ອຍໃຫ້ມີປະສິດທິພາບ.

6. ອົງປະກອບທີໜຶ່ງ: ປະກອບດ້ວຍ ການຟື້ນຟູ ແລະ/ຫຼື ກໍ່ສ້າງລະບົບຊົນລະປະທານຂະໜາດນ້ອຍ, ຂະໜາດກາງ, ຟື້ນຟູ ແລະ/ຫຼື ຍົກລະດັບເສັ້ນທາງຊົນນະບົດ ແລະ ໃນບ່ອນທີ່ມີເງື່ອນໄຂ ແມ່ນຈະມີການຕິດຕັ້ງລະບົບນ້ຳລິນ ແລະ ນ້ຳສະອາດ. ອົງປະກອບນີ້ຈະລວມມີ: (i) ກະກຽມການສຶກສາຄວາມເປັນໄປໄດ້ຂອງໂຄງການຍ່ອຍເຊິ່ງລວມ ທັງການສຶກສາທາງດ້ານການປົກປ້ອງສະພາບແວດລ້ອມ ແລະ ສັງຄົມ. (ii) ກະກຽມການອອກແບບ ລະອຽດ; (iii) ກະກຽມເອກະສານການປະມູນ; (iv) ຈັດຕັ້ງປະຕິບັດວຽກງານການກໍ່ສ້າງເສັ້ນທາງ ຫຼືດ້ານໂຍທາທິການ, ແລະ (v) ຄວບຄຸມການກໍ່ສ້າງ ເພື່ອຮັບປະກັນຄຸນນະພາບ. ຄາດວ່າ ຈະມີການຈັດຕັ້ງປະຕິບັດ 25 ໂຄງການຍ່ອຍໃນ 9 ເມືອງ ທີ່ນອນໃນເປົ້າໝາຍໂຄງການຍ່ອຍການພັດທະນາໂຄງລ່າງພື້ນຖານນີ້.

---

[2] ການລົງທຶນໃສ່ໂຄງລ່າງພື້ນຖານຈະນອນຢູ່ໃນຂອບເຂດ ແຂວງບໍ່ແກ້ວ, ຫຼວງນ້ຳທາ, ແລະ ຜົ້ງສາລີ, ສ່ວນແຂວງອຸດົມໄຊ ແມ່ນຈະໄດ້ຮັບຜົນປະໂຫຍດຈາກໂຄງການພັດທະນາຂະໜາດໃຫຍ່ ທີ່ໃຫ້ທຶນໂດຍກອງທຶນສາກົນ ເພື່ອການພັດທະນາກະສິກຳ, ການຄຸ້ມຄອງການຈັດຕັ້ງປະຕິບັດການລົງທຶນ ຈະໄດ້ຮັບທຶນຂອງໂຄງການ ທີ່ນອນໃນແຂວງອຸດົມໄຊ.

7. ອົງປະກອບທີສອງ: ປະກອບດ້ວຍການລົງທຶນ ທີ່ຕິດພັນກັບການເສີມຂະຫຍາຍຜົນສ້າງມູນຄ່າເພີ້ມຈາກການກໍ່ສ້າງໂຄງລ່າງ ແລະ ຄວາມຍືນຍົງໃຫ້ແກ່ການລົງທຶນ. ດ້ວຍການນໍາໃຊ້ຮູບແບບການມີສ່ວນຮ່ວມ ແລະ ສິ່ງເສີມບົດບາດຍິງຊາຍ ແລະ ຜູ້ໄດ້ຮັບຜົນປະໂຫຍດ ເຊິ່ງລວມມີ: (i) ການຊຸກຍູ້ກຸ່ມຜູ້ຜະລິດ ແລະກຸ່ມເຮັດການຕະຫຼາດການສະໜອງຜົນຜະລິດກະສິກໍາໃຫ້ຕະຫຼາດແລະຜູ້ປຸງແຕ່ງ, (ii) ເສີມຂະຫຍາຍການບໍລິການດ້ານເຕັກນິກ, (iii) ຊຸກຍູ້ການຜະລິດກະສິກໍາຕາມສັນຍາ ທີ່ມີການກະຕຸກຊຸກຍູ້ດ້ານລາຄາ ທີ່ອີງໃສ່ຄຸນນະພາບ, (iv) ວຽກງານດ້ານຮັບປະກັນສິດນໍາໃຊ້ດິນ ແລະ ສິດເຂົ້າເຖິງດິນທີ່ບໍ່ທັນໄດ້ມີການຜະລິດ ແລະ ການແບ່ງເຂດດິນຄືນໃໝ່ ເພື່ອປົກປັກຮັກສາເຂດອ່າງໂຕ່ງ (ແລະ ອ່າງເກັບນ້ໍາ) ທີ່ຢູ່ເຂດເໜືອລະບົບຊົນລະປະທານ, ແລະ (v) ວຽກງານເສີມຂະຫຍາຍການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ເພື່ອປັບປຸງການເຂົ້າເຖິງຕະຫຼາດຂອງຊາວກະສິກອນ.

8. ອົງປະກອບທີ 3: ການສ້າງຄວາມສາມາດຂັ້ນສູນກາງ (ພາຍໃນກະຊວງກະສິກໍາ ແລະ ປ່າໄມ້) ກໍ່ຄື ການ ສ້າງຄວາມສາມາດ ດ້ານການຈັດຕັ້ງປະຕິບັດ ໃຫ້ແກ່ພະນັກງານຫ້ອງການບໍລິຫານໂຄງການສູນກາງ (NPMO), ຫ້ອງການໂຄງການຂັ້ນແຂວງ (PPOs) ແລະ ພະນັກງານປະສານງານຂັ້ນເມືອງ (DCOs). ໂຄງການໃນຂັ້ນສູນ ກາງ ຈະໄດ້ໃຫ້ການຊຸກຍູ້ໜ່ວຍງານຕິດຕາມ ແລະ ປະເມີນຜົນ ທີ່ສ້າງຕັ້ງຂຶ້ນໃໝ່ ພາຍໃນ ກົມແຜນການ ກະຊວງ ກະສິກໍາແລະປ່າໄມ້ ລວມມີການຊຸກຍູ້ທາງດ້ານເຕັກນິກການອອກແບບ ລະບົບຕິດຕາມ ແລະ ຂໍ້ມູນຂ່າວສານ ໂຄງການ. ລວມທັງການປະກອບປັດໃຈຕ່າງໆ ເພື່ອດໍາເນີນລະບົບຕິດຕາມບັນດາໂຄງການ ທີ່ຈັດຕັ້ງປະຕິບັດ.

9. ອົງປະກອບທີ4: ການສ້າງຄວາມອາດສາມາດ ໃຫ້ແກ່ພະນັກງານ NPMO, PPO ແລະ DCOs ແມ່ນມີຄວາມຈໍາເປັນສໍາລັບການຈັດຕັ້ງປະຕິບັດໂຄງການ ເຊິ່ງລວມມີການຄຸ້ມຄອງໂຄງການ, ການຈັດຊື້ຈັດຈ້າງ, ການບໍລິການການເງິນ, ການລາຍຄວາມຄືບໜ້າ, ການຕິດຕາມກວດກາຜົນກະທົບ, ການປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ແລະ ການຄຸ້ມຄອງສັນຍາ. ເນື່ອງຈາກພະນັກງານໂຄງການຈໍານວນໜຶ່ງ ແມ່ນຈັດຈ້າງມາຈາກ ພະນັກງານ ຂອງແຂວງ ແລະ ເມືອງ, ດັ່ງນັ້ນ ການສ້າງຄວາມອາດສາມາດ ແມ່ນມີຄວາມຈໍາເປັນ ເພື່ອເປັນການ ເອື້ອອໍານວຍ ໃຫ້ແກ່ການຈັດຕັງປະຕິບັດໂຄງການໄດ້ຢ່າງຄ່ອງຄຽ່ວ.

## IV. ແຜນການງົບປະມານ ແລະ ການສະໜອງທຶນ

10. ການຊ່ວຍເຫຼືອລ້າໃນມູນຄ່າ 23 ລ້ານໂດລາສະຫະລັດ ຈາກທະນາຄານພັດທະນາອາຊີ ກວມເອົາ93.4% ຈາກລັດຖະບານສົມທົບມູນຄ່າ 1.17ລ້ານ (4.8%) ແລະຈາກຜູ້ໄດ້ຮັບຜົນປະໂຫຍດ 0.46ລ້ານ (1.8% )ໃຫ້ແກ່ໂຄງການ.

11. ລັດຖະບານຈະໃຫ້ເງິນເປັນມູນຄ່າເທົ່າກັບ 1.2 ລ້ານໂດລາສະຫະລັດ ສໍາລັບພະນັກງານລັດທີ່ເຮັດວຽກສະ ເພາະດ້ານການຊ່ວຍເຫຼືອດ້ານການຈັດຕັ້ງປະຕິບັດແຜນການຍົກຍ້າຍຂອງໂຄງການຍ່ອຍ. ບັນດາຜູ້ໄດ້ຮັບຜົນປະ ໂຫຍດ ຈະປະກອບສ່ວນທາງດ້ານແຮງງານໃນການກໍ່ສ້າງຊົນລະປະທານ (ຄອງເໝືອງຍ່ອຍ) ແລະ ລວມທັງຄ່າໃຊ້ ຈ່າຍໃນການບົວ ລະບັດຮັກສາເສັ້ນທາງ ແລະ ລະບົບຊົນລະປະທານປົກກະຕິ (ມູນຄ່າຄາດຄະເນ 0.5 ລ້ານໂດລາ).

## V. ດ້ານການຈັດຕັ້ງປະຕິບັດ ແລະ ໄລຍະເວລາ

12. ກະຊວງກະສິກໍາ ແລະ ປ່າໄມ້ ຈະເປັນຜູ້ຄຸ້ມຄອງ ໂດຍມອບໝາຍຄວາມຮັບຜິດຊອບດ້ານການຄຸ້ມຄອງໂຄງ ການ ແລະ ປະສານງານລວມໃຫ້ກົມແຜນການ ໂດຍຈະມີການສ້າງຕັ້ງ ໜ່ວຍງານປະສານງານໂຄງການ ຊ່ວຍຄຸ້ມຄອງແລະຊຸກຍູ້ການຈັດຕັ້ງປະຕິບັດໂຄງການຢູ່ເມືອງ ປະຈໍາຢູ່ໃນຂັ້ນສູນກາງ. ໃນຂັ້ນແຂວງ ພະແນກກະສິກໍາ ແລະ ປ່າໄມ້ແຂວງ

ຈະເປັນຜູ້ຈັດຕັ້ງປະຕິບັດ ໂດຍຈະມີ ໜ່ວຍງານຄຸ້ມຄອງໂຄງການ ໃນແຕ່ລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ[3] ເພື່ອຮັບຜິດຊອບວຽກປົກກະຕິ ດ້ານການຈັດຕັ້ງ ປະຕິບັດ ແລະ ຄຸ້ມຄອງໂຄງການຍ່ອຍ. ເພື່ອໃຫ້ການຊ່ວຍເຫຼືອດ້ານການຈັດຕັ້ງປະຕິບັດໃນຂັ້ນເມືອງ, ຫ້ອງການ ປະສານງານ ຂັ້ນເມືອງ ຈະໄດ້ຮັບການສ້າງຕັ້ງຂຶ້ນ ພາຍໃນຂອບເຂດຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຈະເປັນໃຈກາງຫຼັກໃນການບັນຊາໃຫ້ເກີດດອກອອກຜົນການຈັດຕັ້ງປະຕິບັດໂຄງການ ລາຍລະອຽດກຳນົດໄວ້ໃນຄູ່ມືການ ຄຸ້ມຄອງໂຄງການ (PAM) ແລະ ໄລຍະເວລາປະຕິບັດ 6 ປີ (2011-2017).

VI. ຄວາມຄືບໜ້າຂອງການປະຕິບັດມາເຖິງປະຈຸບັນ :

❖ **ສັງລວມຫຍໍ້ບົດບັນທຶກຊ່ວຍຈຳຂອງຄະນະວິຊາການຈາກທະນາຄານພັດທະນາອາຊີ (ADB Inception Mission on 1-5 August 2011)**

1. ຄະນະດັ່ງກ່າວປະກອບມີ : ທ່ານ Bui Minh Giap ຫົວໜ້າຄະນະ, ທ່ານ Eileen ຜູ້ຊ່ວຍດ້ານການວິເຄາະໂຄງການ, ພ້ອມກັບ ຊ່ຽວຊານທີ່ປຶກສາປະຈຳໂຄງການ 3 ທ່ານ
2. ດ້ານເນື້ອໃນແມ່ນ ທົບທວນຄືນການກະກຽມໂຄງການຜ່ານມາ ແລະ ສະເໜີແຜນຈັດຕັ້ງປະຕິບັດໃນຕໍ່ໜ້າ ຕາມເງື່ອນໄຂສັນຍາ ລະຫວ່າງ ລັດຖະບານລາວ ກັບ ADB ໃນການຮັບເອົາທຶນຊ່ວຍເຫຼືອລ້າດັ່ງກ່າວ, ແລະມີຜົນສຳເລັດຄື :
3. ແຜນການຈັດຫາ ຄະນະວິຊາການພາຍໃນ ເພື່ອສືບຕໍ່ລົງສຳຫຼວດອອກແບບຄິດໄລ່ບໍລິມາດ ແລະຄຸ້ມຄອງກວດກາການກໍ່ສ້າງຕົວຈິງ, ພ້ອມທັງລົງເກັບຂໍ້ມູນລະອຽດສຶກສາບັນດາໂຄງການຍ່ອຍ ປະກອບເປັນບົດວິພາກເສດຖະກິດເຕັກນິກ ຕາມເງື່ອນໄຂຂອງ ADB ທີ່ໄດ້ກຳນົດໄວ້ໃນເອກະສານຂອງໂຄງການ ຊຶ່ງມີຜົນສັກສິດໃນການເບີກຈ່າຍທຶນຊ່ວຍເຫຼືອລ້າດັ່ງກ່າວ.
4. ສຳເລັດການສະເໜີ ແຜນການກຳນົດໜ້າວຽກລະອຽດ ບັນດາໂຄງການຍ່ອຍຂ້າງເທິງ ແລະ ແຜນການຈັດຕັ້ງປະຕິບັດໄປຍັງ ADB ໃນວັນທີ 05 ກັນຍາ 2011 ລວມໃນບົດລາຍງານເບື້ອງຕົ້ນຂອງໂຄງການ.
5. ການສ້າງຕັ້ງຫ້ອງການຄຸ້ມຄອງໂຄງການຂັ້ນສູນກາງຮ່ວມກັບໂຄງການສົ່ງເສີມຜະລິດເປັນສິນຄ້າ (ສສຄກປ) ພາກໃຕ້ຢູ່ຕຶກບ້ານໂພນໄຊໃນປະຈຸບັນ ເພື່ອເປັນໃຈກາງຄຸ້ມຄອງບັນດາໂຄງການພາຍໃນກະຊວງກະສິກຳ ແລະ ປ່າໄມ້ ໃນອະນາຄົດ, ສ້າງຕັ້ງໜ່ວຍງານຄຸ້ມຄອງບໍລິຫານການເງິນ-ການຈັດຊື້ຈັດຈ້າງໂຄງການເບື້ອງຕົ້ນໃນສອງໂຄງການ.
6. ສຳເລັດການເປີດບັນຊີຍ່ອຍໃຫ້ສາມແຂວງ (ຜົ້ງສາລີ, ຫຼວງນ້ຳທາ ແລະບໍ່ແກ້ວ)
7. ສຳເລັດການສະເໜີ ບັນດາເອກະສານລາຍງານ ແລະຂໍອະນຸມັດ ໄປ ADB ມີຄື :
    - ຮ່າງພາລະບົດບາດໜ້າວຽກລະອຽດ ສະເໜີໄປຍັງ ADB ໃນວັນທີ 05 ກັນຍາ 2011 ຂອງຄະນະວິຊາການພາຍໃນ ເພື່ອສືບຕໍ່ລົງສຳຫຼວດອອກແບບຄິດໄລ່ບໍລິມາດ ແລະຄຸ້ມຄອງກວດກາການກໍ່ສ້າງຕົວຈິງ, ພ້ອມທັງລົງເກັບຂໍ້ມູນລະອຽດສຶກສາບັນດາໂຄງການຍ່ອຍ.
    - ກຳນົດແຜນການຈັດຕັ້ງປະຕິບັດລະອຽດ ສະເໜີໄປຍັງ ADB ໃນວັນທີ 05 ກັນຍາ 2011.
    - ເປີດບັນຊີຍ່ອຍໃຫ້ສາມແຂວງ (ຜົ້ງສາລີ, ຫຼວງນ້ຳທາ ແລະບໍ່ແກ້ວ) ໃນວັນທີ 05 ສິງຫາ 2011.
    - ສະເໜີ ແຜນການສ້ອມແປງຫ້ອງການ ໃນວັນທີ 05 ສິງຫາ 2011.
    - ການສ້າງຕັ້ງໜ່ວຍງານຄຸ້ມຄອງບໍລິຫານການເງິນ-ການປະມູນຈັດຊື້ຈັດຈ້າງໂຄງການ ໃນວັນທີ 05 ສິງຫາ 2011.
    - ບັນທຶກເຮັດວຽກຮ່ວມກັບສະຖາບັນໃນການຕິດຕາມກິດຈະກຳ ແລະ ແຜນການຈັດຕັ້ງໜ່ວຍງານຕິດຕາມປະເມີນຜົນໂຄງການ ໃນວັນທີ 30 ຕຸລາ 2011.

---

[3] ແຂວງບໍ່ແກ້ວ, ຫຼວງນ້ຳທາ. ແລະ ຜົ້ງສາລີ. ສຳລັບແຂວງອຸດົມໄຊ ໂຄງການຈະຈັດຕັ້ງປະຕິບັດໂດຍພະແນກກະສິກຳ ແລະ ປ່າໄມ້ເມືອງ ແຕ່ຢູ່ໃຕ້ຂອບເຂດກິດຈະກຳສົ່ງເສີມ, ຄ່າໃຊ້ຈ່າຍບໍລິຫານໃນການຈັດຕັ້ງປະຕິບັດຈະລວມເຂົ້າໃນຄ່າໃຊ້ຈ່າຍບໍລິຫານທີ່ຈຳເປັນອື່ນໆຂອງໂຄງການຍ່ອຍ.

VII. ໜ້າວຽກທີ່ປະຕິບັດໄດ້ພາຍໃນເດືອນ :

1. ລົງລົງທົບກັບພະນັກງານວິຊາການຂັ້ນແຂວງ ແລະ ຂັ້ນເມືອງເກັບກຳຂໍ້ມູນໃນທົກໂຄງການຍ່ອຍ ໃນກຸ່ມ ປີທີ1 ເພື່ອຂຽນບົດວິພາກເສດຖະກິດເຕັກນິກ(FS)ໂຄງການຍ່ອຍ ຢູ່ 6 ເມືອງຂອງ 3 ແຂວງ( ບໍ່ແກ້ວ, ຫຼວງນ້ຳທາ ແລະ ຜົ້ງສາລີ).
2. ຕິດຕາມການຈັດຫາຄນະວິຊາການພາຍໃນສະເໜີບົດດ້ານວິຊາການແລະລາຄາກ່ຽວກັບວຽກຂຽນບົດວິພາກເສດຖະກິດເຕັກນິກ (FS), ສຳຫຼວດອອກແບບລະອຽດ(DD) ແລະຄຸ້ມຄອງກວດກາການກໍ່ສ້າງ(CS) ໂຄງການຍ່ອຍກຸ່ມປີທີ1.
3. ສຳເລັດການເຮັດບົດລາຍງານເບື້ອງຕົ້ນໃນແຜນຈັດຕັ້ງປະຕິບັດ ( Inception Report ) ແລະໄດ້ສົ່ງໃຫ້ທະນາຄານພັດທະນາອາຊີ.
4. ກຽມແບບຟອມສຳຫຼວດແລະຄຳຖາມ ສຳລັບເກັບກຳຂໍ້ມູນໂຄງການຍ່ອຍ 6ໂຄງການກຸ່ມປີທີ1 ເພື່ອຂຽນບົດວິພາກ ເສດຖະກິດເຕັກນິກ(FS).
5. ຈັດທີມງານວິຊາການພ້ອມດ້ວຍທີ່ປຶກສາປະຈຳໂຄງການລົງລົງທົບກັບພະນັກງານວິຊາການຂັ້ນແຂວງ ແລະຂັ້ນເມືອງທັງ3ແຂວງເພື່ອສຳຫຼວດເກັບກຳຂໍ້ມູນເຕັກນິກ, ຂໍ້ມູນເສດຖະກິດສັງຄົມ (ເຮັດບັນຊີຄົວເຮືອນຂັ້ນບ້ານ (master list of village), ຂໍ້ມູນສິ່ງແວດລ້ອມ,ຂໍ້ມູນຍົກຍ້າຍສິ່ງກີດຂວາງ,ຂໍ້ມູນກະສິກຳແລະການຕະຫຼາດ ຂອງ 6 ໂຄງການ ຍ່ອຍກຸ່ມປີທີ1 ເພື່ອຂຽນບົດວິພາກເສດຖະກິດເຕັກນິກ(FS)ແລະຈັດຕັ້ງກຸ່ມຜະຫຼິດໃນເຂດໂຄງການ.
6. ແຈ້ງໃຫ້ໂຄງການ ພຄຊ 03ແຂວງ ກຽມຈັດປະຊຸມຄນະຊີ້ນຳໂຄງການ ພຄຊ ຂັ້ນແຂວງ(ຄາດໝາຍໃຫ້ສຳເລັດກ່ອນ 15/12/2011ນີ້).
7. ຈັດອົບຮົມ ພ/ງບັນຊີ ການເງິນ ຈາກ 04ແຂວງ (ບໍ່ແກ້ວ, ຫຼວງນ້ຳທາ,ຜົ້ງສາລີ ແລະ ອຸດົມໄຊ) ແຂວງລະ 02 ຄົນ ກຳນົດ 03ມື້ 23-25/11/2011.
8. ຈັດປະຊຸມຄະນະກຳມະການປະມູນກ່ຽວກັບ ການຈັດຊື້ພາຫານະແລະອຸບປະກອນໂຄງການ ປະກອບໃຫ້ແຂວງ ແລະເມືອງ ຕາມເງື່ອນໄຂ ແລະ ລະບຽບການຂອງທະນາຄານພັດທະນາອາຊີ ທີ່ກຳລັງດຳເນີນການອະນຸມັດນຳກະຊວງທີ່ກ່ຽວຂ້ອງ ຕາມຂັ້ນຕອນສະເພາະຂອງແຕ່ລະປະເພດການຈັດຊື້ (ມີບັນຊີລາຍລະອຽດສະເພາະ).

VIII. ແຜນການເດືອນຕໍ່ໄປ

1. ສືບຕໍ່ຕິດຕາມການອະນຸມັດນຳກະຊວງທີ່ກ່ຽວຂ້ອງໃນວຽກງານຈັດຊື້ພາຫານະ ແລະອຸບປະກອນຮັບໃຊ້ໂຄງການປະກອບໃຫ້ແຂວງແລະເມືອງ ເພື່ອກຽມເຮັດປະມູນຂັ້ນຕໍ່ໄປ.
2. ກະກຽມເປີດແວບໄຊສ້າງຕັ້ງລະບົບຕິດຕາມປະເມີນຜົນໄດ້ຮັບ (BME) ຂອງໂຄງການ.
3. ສືບຕໍ່ລົງລົງທົບ ກັບພະນັກງານວິຊາການຂັ້ນແຂວງ ແລະ ຂັ້ນເມືອງ ເກັບກຳຂໍ້ມູນດ້ານເສດຖະກິດ ສັງຄົມ ໃນທົກ ໂຄງການຍ່ອຍໃນກຸ່ມປີທີ1 ເພື່ອຂຽນບົດວິພາກເສດຖະກິດເຕັກນິກ (FS)ໂຄງການຍ່ອຍ ຢູ່ 6 ເມືອງ ຂອງ 3 ແຂວງ (ບໍ່ແກ້ວ, ຫຼວງນ້ຳທາ ແລະ ຜົ້ງສາລີ)
4. ເຮັດສັນຍາ ກັບ ຄນະວິຊາການພາຍໃນ ເພື່ອດຳເນີນການສຳ ຫຼວດຂໍ້ມູນພື້ນຖານ 6ໂຄງການຍ່ອຍ ເສດຖະກິດເຕັກນິກ(FS),
5. ສືບຕໍ່ຈັດຫາບໍລິສັດພາຍໃນເພື່ອສຳຫຼວດອອກແບບລະອຽດ(DD) ແລະ ຄຸ້ມຄອງການກໍ່ສ້າງ(CS) 3 ໂຄງການຍ່ອຍກຸ່ມປີທີ1.
6. ສືບຕໍ່ຂາຍຊອງປະມູນການກໍ່ສ້າງຫ້ອງການໂຄງການຂັ້ນສູນກາງ ຕາມລະບຽບການ ຂອງທະນາຄານພັດທະນາອາຊີ ພ້ອມກັບການຂໍອະນຸມັດພາຍໃນຕາມລະບຽບການ.

7. ສືບຕໍ່ຕິດຕາມການອະນຸມັດນຳກະຊວງກ່ຽວຂ້ອງໃນການຈັດຊື້ພາຫານະ ແລະ ອຸປະກອນຮັບໃຊ້ໂຄງການເພື່ອກຽມເຮັດການປະມູນຕໍ່ໄປ.

VIII. ບັນຫາແລະຂໍ້ສະເໜີ :

1. ສະເໜີຂັ້ນເທິງ ປະສານຊຸກຍູ້ການຂໍອະນຸມັດນຳກະຊວງ ແລະຂະແໜງການທີ່ກ່ຽວຂ້ອງໃນແຜນຈັດຕັ້ງປະຕິບັດບັນດາກິດຈະກຳໂຄງການ ໃຫ້ທັນກຳນົດເວລາ ແລະມີປະສິດທິພາບສູງຕາມຄາດໝາຍທີ່ວາງໄວ້.

❖ **ເອກະສານຄັດຕິດ:**

- ແຜນທີ່ສະແດງທີ່ຕັ້ງໂຄງການ
- ຕາຕະລາງຄັດຕິດ 4 (ແຜນລວມໃນການຈັດຕັ້ງປະຕິບັດໂຄງການ)
- ຕາຕະລາງຄັດຕິດ 5 (ຕາຕະລາງເວລາປະຕິບັດແຕ່ເດືອນ ຕຸລາ ປີ 2011 ເຖິງ ມິຖຸນາ 2012)